ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 240 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 36/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງ ເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 16/ຄປຈ, ລົງວັນທີ 15 ທັນວາ 2021.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ປະທານປະເທດ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 36 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

**ມະຕິ**

**ຂອງກອງປະຊຸມສະພາແຫ່ງຊາດ**

**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ**

**(ສະບັບປັບປຸງ)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 12 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 16 ພະຈິກ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ) ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 09 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

# ກົດໝາຍ
# ວ່າດ້ວຍການຄວບຄຸມຢາສູບ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມກວດກາ ວຽກງານຄວບຄຸມຢາສູບ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຫຼຸດຜ່ອນ ການຊົມໃຊ້ຢາສູບ, ຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ, ປົກປ້ອງ, ສົ່ງເສີມໃຫ້ພົນລະເມືອງ ມີສຸຂະພາບດີ ແລະ ປົກປັກຮັກສາສິ່ງແວດລ້ອມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ການຄວບຄຸມຢາສູບ**

ຢາສູບ ແມ່ນ ຜະລິດຕະພັນ ທີ່ຖືກປຸງແຕ່ງຈາກໃບຢາສູບ ທັງໝົດ, ບາງສ່ວນ ແລະ ຜະລິດຕະພັນຢາສູບຮູບແບບອື່ນ ທີ່ມີສານນິໂກຕິນເປັນສ່ວນປະກອບ ຊຶ່ງເປັນທາດເບື່ອ ແລະ ເປັນສິ່ງເສບຕິດ.

ການຄວບຄຸມຢາສູບ ແມ່ນ ການນຳໃຊ້ມາດຕະການໃນການ ຄຸ້ມຄອງ, ຕິດຕາມ, ກວດກາ ການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຊື້ ຂາຍ, ໂຄສະນາ ສົ່ງເສີມ ແລະ ອຸປະຖຳ ຜະລິດຕະພັນຢາສູບ, ພິມຄຳເຕືອນສຸຂະພາບ, ສະຫຼາກ, ສະຖານທີ່ຫ້າມສູບຢາ ແລະ ການນຳໃຊ້ມາດຕະການອື່ນ ເພື່ອຫຼຸດຜ່ອນການຊົມໃຊ້ຢາສູບ, ຜົນຮ້າຍທີ່ເກີດຈາກການຊົມໃຊ້ຜະລິດຕະພັນຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຊົມໃຊ້ຢາສູບ** ໝາຍເຖິງ ການສູບ, ຄ້ຽວ, ອົມ, ດົມ, ດູດ, ກືນ, ສູດ, ຖູນ, ທາ, ອົມ ຫຼື ພົ່ນເຂົ້າໄປໃນຮ່າງກາຍ ໂດຍຜ່ານປາກ ຫຼື ດັງ ຫຼື ວິທີການອື່ນ ທີ່ພາໃຫ້ເກີດຄວັນ ຫຼື ບໍ່ເກີດຄວັນ;
2. **ຄວັນຢາສູບມືສອງ** ໝາຍເຖິງ ຄວັນຢາສູບທີ່ພົ່ນອອກຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;

3. **ການໄດ້ຮັບຄວັນຢາສູບມືສອງ** ໝາຍເຖິງ ຜູ້ບໍ່ສູບຢາ ໄດ້ຮັບຄວັນທີ່ພົ່ນອອກຈາກຜູ້ສູບຢາ ຫຼື ຄວັນອອກຈາກກອກຢາສູບທີ່ຈູດປະໄວ້;

4. **ຜະລິດຕະພັນຢາສູບຮຽນແບບ** ໝາຍເຖິງ ຜະລິດຕະພັນຄ້າຍຄືຜະລິດຕະພັນຢາສູບ;

5. **ເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ** ໝາຍເຖິງ ເຄື່ອງຈັກຂາຍຜະລິດຕະພັນຢາສູບ ທີ່ຜູ້ຊົມໃຊ້ ສາມາດຊື້ໄດ້ ດ້ວຍການນຳໃຊ້ເງິນສົດ, ປອດຫຼຽນ ຫຼື ບັດສະເພາະ;

6. **ຜູ້ປະກອບການ** ໝາຍເຖິງ ຜູ້ຜະລິດ, ນຳເຂົ້າ, ສົ່ງອອກ, ຂາຍຍົກ, ຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ;

7. **ຢາສູບນອກລະບົບ** ໝາຍເຖິງ ຜະລິດຕະພັນຢາສູບທີ່ລັດບໍ່ເກືອດຫ້າມ ແຕ່ມີການຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ຊື້ ຂາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

8. **ຢາສູບເຖື່ອນ** ໝາຍເຖິງ ຜະລິດຕະພັນຢາສູບແບບອຸດສາຫະກຳ ແລະ ຫັດຖະກຳ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ ແລະ ຊື້ ຂາຍ;

9. **ການອຸປະຖຳຈາກອຸດສາຫະກຳຢາສູບ** ໝາຍເຖິງ ການປະກອບສ່ວນທຸກປະເພດ ໂດຍທາງກົງ ຫຼື ທາງອ້ອມ ຜ່ານກິດຈະກຳ ຫຼື ວິທີການໃດໜຶ່ງ ເປັນຕົ້ນ ການອຸປະຖຳການສຶກສາ, ກິລາ, ສິລະປະ, ວັນນະຄະດີ, ອຸປະກອນການແພດ, ຄົ້ນຄວ້າ, ວິໄຈ, ປູກຝັງ, ລ້ຽງສັດ, ກິດຈະກຳທາງສັງຄົມ ເພື່ອຈູງໃຈ ຫຼື ສົ່ງເສີມການຂາຍ ແລະ ການຊົມໃຊ້ຜະລິດຕະພັນຢາສູບ;

10. **ການໂຄສະນາຜະລິດຕະພັນຢາສູບ** ໝາຍເຖິງ ການນຳສະເໜີ ດ້ວຍວິທີການໃດໜຶ່ງ ໂດຍທາງກົງ ຫຼື ທາງອ້ອມ ເພື່ອຈຸດປະສົງ ຊຸກຍູ້, ຈູງໃຈ, ສົ່ງເສີມ ໃຫ້ຊື້ ຫຼື ຊົມໃຊ້ຜະລິດຕະພັນຢາສູບ ໂດຍຜ່ານບຸກຄົນ, ສື່ສິ່ງພິມ, ໂທລະພາບ, ວິທະຍຸ, ຮູບເງົາ, ການສື່ສານດ້ານເອເລັກໂຕຣນິກ, ສື່ສັງຄົມອອນລາຍ, ວິດີໂອ, ໂທລະສັບ, ການຕິດປ້າຍ, ກະດານຂ່າວ, ການວາງສະແດງຮູບພາບ ຫຼື ຕົວແບບ, ການວາງຜະລິດຕະພັນຢາສູບ ຢູ່ຈຸດຂາຍ, ກິດຈະກຳທາງສັງຄົມ ແລະ ວິທີການອື່ນ;

11. **ພາຍໃນອາຄານ** ໝາຍເຖິງ ສະຖານທີ່ ທີ່ມຸງດ້ວຍຫຼັງຄາ, ແອ້ມດ້ວຍຝາ ຫຼື ບໍ່ມີຝາ ຖາວອນ ຫຼື ຊົ່ວຄາວ ລວມທັງລະບຽງ, ລິບ, ຂັ້ນໄດ, ບ່ອນຮັບແຂກ, ອາຄານຕໍ່ເຕີມ, ຫ້ອງອາຫານ, ຫ້ອງນ້ຳ, ຫ້ອງນັ່ງຫຼິ້ນ, ເທີບ, ຕູບ ແລະ ອື່ນໆ;

12. **ການຈົດແຈ້ງເອກະສານກ່ຽວກັບການນຳເຂົ້າ** ໝາຍເຖິງ ການແຈ້ງຈຳນວນຜະລິດຕະພັນຢາສູບທີ່ຈະນຳເຂົ້າ ພ້ອມດ້ວຍຕົວຢ່າງ, ສ່ວນປະກອບ, ສ່ວນປະສົມຂອງແຕ່ລະຍີ່ຫໍ້ ແລະ ສານທີ່ເກີດຈາກການເຜົາໄໝ້.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຄວບຄຸມຢາສູບ

ລັດ ສົ່ງເສີມວຽກງານຄວບຄຸມຢາສູບ ດ້ວຍການ ສ້າງ, ພັດທະນາ ແລະ ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ ແລະ ວັດຖຸປະກອນ ໃຫ້ແກ່ການເຄື່ອນໄຫວວຽກງານຄວບຄຸມຢາສູບ.

ລັດ ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຕໍ່ວຽກງານຄວບຄຸມຢາສູບ ດ້ວຍການວາງນະໂຍບາຍ, ມາດຕະການຕ່າງໆ ເປັນຕົ້ນ ການເພີ່ມອາກອນ ແລະ ລາຄາ, ການພິມຄຳເຕືອນສຸຂະພາບ, ການຫ້າມໂຄສະນາຜະລິດຕະພັນຢາສູບ, ການກຳນົດສະຖານທີ່ຫ້າມສູບຢາ, ຈຳໜ່າຍ, ຊື້ ຂາຍ ຢາສູບ ລວມທັງ ບໍ່ສົ່ງເສີມໃນການສ້າງຕັ້ງໂຮງງານ ແລະ ບໍ່ມີສັດຢາສູບຂຶ້ນໃໝ່.

ລັດ ເອົາໃຈໃສ່ ໂຄສະນາ, ສຶກສາອົບຮົມ ໃຫ້ທົ່ວສັງຄົມ ດ້ວຍຫຼາຍຮູບການ ເພື່ອສ້າງຈິດສຳນຶກໃຫ້ເຫັນໄດ້ຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ດ້ວຍການສະໜອງຂໍ້ມູນຂ່າວສານ ທີ່ຖືກຕ້ອງຕາມຫຼັກການທາງດ້ານວິທະຍາສາດ ແລະ ຊຸກຍູ້ ສົ່ງເສີມ ບຸກຄົນ, ຄອບຄົວ, ການຈັດຕັ້ງ

ທັງພາກລັດ ແລະ ເອກະຊົນໃຫ້ເຂົ້າຮ່ວມ ຫຼື ມີສ່ວນຮ່ວມໃນການຄວບຄຸມຢາສູບ ລວມທັງ ສົ່ງເສີມໃຫ້ຊາວກະສິກອນປູກພືດເສດຖະກິດຊະນິດອື່ນທົດແທນການປູກຢາສູບ.

ລັດ ປົກປ້ອງນະໂຍບາຍທາງດ້ານສຸຂະພາບຈາກການແຊກແຊງ ຂອງອຸດສາຫະກຳຢາສູບໃນທຸກຮູບແບບ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານຄວບຄຸມຢາສູບ**

ວຽກງານຄວບຄຸມຢາສູບ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາວ່າດ້ວຍການຄວບຄຸມຢາສູບ ທີ່ ສປປ ລາວ ເປັນພາຄີ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນການປະຕິບັດຕາມການກຳນົດສະຖານທີ່ຫ້າມ ແລະ ອະນຸຍາດໃຫ້ສູບຢາ ຢ່າງເຂັ້ມງວດ;
4. ຮັບປະກັນໃຫ້ພົນລະເມືອງທຸກຄົນ ດຳລົງຊີວິດຢູ່ໃນສະພາບແວດລ້ອມທີ່ປອດຄວັນຢາສູບ, ສາມາດເຂົ້າເຖິງການບໍລິການບຳບັດອອກຢາສູບ ແລະ ປິ່ນປົວເມື່ອໄດ້ຮັບຜົນຮ້າຍຈາກການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ;
5. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
6. ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄວບຄຸມຢາສູບ.

**ມາດຕາ 6 (ປັບປຸງ) ພັນທະກ່ຽວກັບວຽກງານຄວບຄຸມຢາສູບ**

ບຸກຄົນ, ຄອບຄົວ, ຊຸມຊົນ, ສັງຄົມ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ມີພັນທະປະກອບສ່ວນເຂົ້າໃນວຽກງານຄວບຄຸມຢາສູບ ດ້ວຍການເປັນແບບຢ່າງໃນການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ, ເປັນເຈົ້າການສຶກສາອົບຮົມ, ແນະນຳຜູ້ຢູ່ໃກ້ຄຽງ ຫຼື ຢູ່ໃນການຄຸ້ມຄອງຂອງຕົນໃຫ້ເຫັນໄດ້ຜົນຮ້າຍຈາກການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄວບຄຸມຢາສູບ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມຢາສູບ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າ ວິທະຍາສາດ, ເຕັກນິກວິຊາການ, ເຕັກໂນໂລຊີ, ການສ້າງ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ ແລະ ທັນສະໄໝ, ປະຕິບັດສົນທິສັນຍາວ່າດ້ວຍການຄວບຄຸມຢາສູບ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ປະເພດ, ຊະນິດ ຜະລິດຕະພັນຢາສູບ ແລະ ຜົນຮ້າຍຂອງຢາສູບ
## ໝວດທີ 1
## ປະເພດ ແລະ ຊະນິດ ຜະລິດຕະພັນຢາສູບ

### ມາດຕາ 9 ປະເພດຜະລິດຕະພັນຢາສູບ

ຜະລິດຕະພັນຢາສູບ ມີ ສອງປະເພດ ດັ່ງນີ້:

1. ຜະລິດຕະພັນຢາສູບແບບອຸດສາຫະກຳ;
2. ຜະລິດຕະພັນຢາສູບແບບຫັດຖະກຳ.

### ມາດຕາ 10 ຜະລິດຕະພັນຢາສູບແບບອຸດສາຫະກຳ

ຜະລິດຕະພັນຢາສູບແບບອຸດສາຫະກຳ ແມ່ນ ຜະລິດຕະພັນຢາສູບທີ່ຜະລິດ ດ້ວຍເຄື່ອງຈັກໃນໂຮງງານ ຊຶ່ງສາມາດຜະລິດໄດ້ເປັນຈຳນວນຫຼວງຫຼາຍ.

### ມາດຕາ 11 (ປັບປຸງ) ຜະລິດຕະພັນຢາສູບແບບຫັດຖະກຳ

ຜະລິດຕະພັນຢາສູບແບບຫັດຖະກຳ ແມ່ນ ຜະລິດຕະພັນຢາສູບ ທີ່ຜະລິດດ້ວຍມື ຫຼື ການນຳໃຊ້ເຄື່ອງມືແບບປະຖົມປະຖານ ເພື່ອຜົນປະໂຫຍດທາງດ້ານການຄ້າ.

### ມາດຕາ 12 (ປັບປຸງ) ຊະນິດຜະລິດຕະພັນຢາສູບ

ຜະລິດຕະພັນຢາສູບ ມີຫຼາຍຊະນິດ ເຊັ່ນ ຢາເສັ້ນ, ຢາຊອງ, ຢາຊີກາ, ຢາສູບໄຟຟ້າ ລວມທັງຢາສູບແບບອາຍລະເຫີຍ, ຊີຊາ ຫຼື ບາຣາກູ ແລະ ຢາສູບຊະນິດອື່ນ.

## ໝວດທີ 2
## ຜົນຮ້າຍຂອງຢາສູບ

### ມາດຕາ 13 (ປັບປຸງ) ຜົນຮ້າຍຕໍ່ສຸຂະພາບ

ການຊົມໃຊ້ຢາສູບ ມີຜົນຮ້າຍຕໍ່ສຸຂະພາບຂອງຜູ້ຊົມໃຊ້ຢາສູບ ແລະ ຜູ້ໄດ້ຮັບຄວັນຢາສູບມືສອງ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ຊຶ່ງມີຄວາມສ່ຽງໃນການເປັນພະຍາດຮ້າຍແຮງ ເຊັ່ນ ພະຍາດ ມະເຮັງປອດ, ຫົວໃຈ-ເສັ້ນເລືອດ, ເສັ້ນເລືອດໃນສະໝອງຕີບ, ຕັບ, ແຕກ, ລະບົບຫາຍໃຈຊຳເຮື້ອ, ລະບົບລະລາຍ, ລະບົບປະສາດ, ເບົາຫວານ, ຄວາມດັນເລືອດສູງ ແລະ ພະຍາດອື່ນ ຊຶ່ງນຳໄປສູ່ການເປັນພິການຂອງອະໄວຍະວະໃດໜຶ່ງ ແລະ ການເສຍຊີວິດກ່ອນໄວອັນຄວນ.

### ມາດຕາ 14 ຜົນກະທົບຕໍ່ຄອບຄົວ

ການຊົມໃຊ້ຢາສູບ ມີຜົນກະທົບທາງລົບຕໍ່ສະມາຊິກຂອງຄອບຄົວ ເປັນຕົ້ນ ແມ່ຍິງ, ເດັກນ້ອຍ. ຄອບຄົວ ຍັງຕ້ອງໄດ້ຈ່າຍເງິນເຂົ້າໃນການຊື້ຢາສູບ ແລະ ປິ່ນປົວພະຍາດທີ່ເກີດຂຶ້ນ ຊຶ່ງເປັນການເພີ່ມພາລະແບກຫາບຂອງຄອບຄົວ.

**ມາດຕາ 15 (ປັບປຸງ) ຜົນກະທົບຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ**

ການຊົມໃຊ້ຢາສູບ ເປັນການທຳລາຍສຸຂະພາບຂອງຜູ້ອອກແຮງງານ, ຜູ້ຜະລິດ ທັງເພີ່ມຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ຊຶ່ງເປັນຜົນກະທົບທາງລົບຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ເປັນການທຳລາຍສິ່ງແວດລ້ອມ.

## ພາກທີ III

## ການຄວບຄຸມຜະລິດຕະພັນຢາສູບ

### ໝວດທີ 1

### ການຄວບຄຸມ ການຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ

**ມາດຕາ 16 (ປັບປຸງ) ການຄວບຄຸມການຜະລິດ**

ການຜະລິດຢາສູບແບບອຸດສາຫະກຳ ແລະ ຫັດຖະກຳ ຢູ່ ສປປ ລາວ ຕ້ອງຢູ່ພາຍໃຕ້ການຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢ່າງເຂັ້ມງວດ ແລະ ປະຕິບັດ ຕາມການກຳນົດຂອງອົງການຄຸ້ມຄອງ ແລະ ກວດກາ ວຽກງານຄວບຄຸມຢາສູບ ເປັນຕົ້ນ ມາດຕະຖານການຜະລິດ, ວັນ, ເດືອນ, ປີຜະລິດ, ກົດສະແດງອາກອນ, ການພິມຄຳເຕືອນສຸຂະພາບ ແລະ ສະຫຼາກ.

**ມາດຕາ 17 (ປັບປຸງ) ການຄວບຄຸມການ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ**

ການນຳເຂົ້າຜະລິດຕະພັນຢາສູບ ເພື່ອຈຳໜ່າຍ, ຊື້ ຂາຍ ໃນ ສປປ ລາວ ຕ້ອງຢູ່ພາຍໃຕ້ການຄວບຄຸມ, ຄຸ້ມຄອງ, ຕິດຕາມ, ກວດກາ ຢ່າງເຂັ້ມງວດ ຂອງຂະແໜງການສາທາລະນະສຸກ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເຊັ່ນ ການອະນຸຍາດ, ການພິມຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ ແລະ ກົດສະແດງພາສີ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການສົ່ງອອກຜະລິດຕະພັນຢາສູບ ຕ້ອງປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ປະຕິບັດຕາມເງື່ອນໄຂຂອງປະເທດ ຜູ້ນຳເຂົ້າ.

ການສົ່ງຜະລິດຕະພັນຢາສູບ ຜ່ານ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ຕ້ອງແຈ້ງເອກະສານກ່ຽວກັບການສົ່ງຜ່ານນັ້ນ ໃຫ້ຂະແໜງການສາທາລະນະສຸກ.

ສຳລັບຜະລິດຕະພັນຢາສູບທີ່ນຳເຂົ້າ ເພື່ອຈຳໜ່າຍ, ຊື້ ຂາຍ ຢູ່ຮ້ານຄ້າປອດພາສີ ຕ້ອງມີຄຳເຕືອນສຸຂະພາບ ແລະ ສະຫຼາກ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 (ປັບປຸງ) ການຄວບຄຸມການ ຈຳໜ່າຍ ແລະ ຊື້ ຂາຍ**

ຜະລິດຕະພັນຢາສູບ ທີ່ຈຳໜ່າຍ ແລະ ຊື້ ຂາຍ ໃນ ສປປ ລາວ ຕ້ອງມີຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ, ກົດສະແດງອາກອນ ແລະ/ຫຼື ສະແດງພາສີ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການຈຳໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ ໃນ ສປປ ລາວ ລວມທັງຂາຍຍົກ ແລະ ຂາຍຍ່ອຍ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍປະສານສົມທົບກັບຂະແໜງການສາທາລະນະສຸກ.

# ໝວດທີ 2
# ພັນທະຂອງຜູ້ຜະລິດ, ນຳເຂົ້າ,ຈຳໜ່າຍ ແລະ ຊື້ ຂາຍ ແລະ ຜູ້ຊົມໃຊ້ ຜະລິດຕະພັນຢາສູບ

## ມາດຕາ 19 (ປັບປຸງ) ພັນທະຂອງຜູ້ຜະລິດ

ຜູ້ຜະລິດ ຜະລິດຕະພັນຢາສູບ ຢູ່ ສປປ ລາວ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ພິມຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ ແລະ ຕິດສະແຕມອາກອນ ໃສ່ ຊອງ, ຕຸດ, ຫີບ ຜະລິດຕະພັນຢາສູບ;
3. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບສ່ວນປະກອບ, ສ່ວນປະສົມ, ຈຳນວນຜະລິດຕະພັນຢາສູບຂອງແຕ່ລະຍີ່ຫໍ້, ການຕະຫຼາດຢາສູບ, ຄ່າໃຊ້ຈ່າຍໃນການຕະຫຼາດຢາສູບ ແລະ ສານທີ່ເກີດຈາກການເຜົາໄໝ້ ພ້ອມດ້ວຍຕົວຢ່າງໃຫ້ກະຊວງການສາທາລະນະສຸກ ສອງຄັ້ງຕໍ່ປີ ເພື່ອດຳເນີນການກວດສອບ ແລະ ເປີດເຜີຍຕໍ່ປະຊາຊົນ;
4. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບໂຄງລ່າງຕົ້ນທຶນຂອງການຜະລິດຢາສູບ ແລະ ລາຍຮັບ ປະຈຳປີ ໃຫ້ກະຊວງການເງິນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ;
5. ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
6. ດຳເນີນທຸລະກິດຜະລິດຕະພັນຢາສູບ ຢ່າງໂປ່ງໃສ ແລະ ສາມາດກວດສອບໄດ້;
7. ປົກປັກຮັກສາສິ່ງແວດລ້ອມໃນຂອບເຂດພື້ນທີ່ການຜະລິດຂອງຕົນ;
8. ປ້ອງກັນ ແລະ ສົ່ງເສີມສຸຂະພາບຂອງຜູ້ອອກແຮງງານໃນຂະບວນການຜະລິດຢາສູບ ຕາມກົດໝາຍທີ່ກ່ຽວຂ້ອງ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ມາດຕາ 20 (ປັບປຸງ) ພັນທະຂອງຜູ້ນຳເຂົ້າ

ຜູ້ນຳເຂົ້າຜະລິດຕະພັນຢາສູບ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ນຳເຂົ້າຜະລິດຕະພັນຢາສູບ ທີ່ມີຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີຜະລິດ, ຕິດສະແຕມພາສີໃສ່ ຊອງ, ຕຸດ, ຫີບ ຜະລິດຕະພັນຢາສູບ ຕາມກົດໝາຍ ແລະ ລະບຽບການ;
3. ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
4. ດຳເນີນທຸລະກິດຜະລິດຕະພັນຢາສູບ ຢ່າງໂປ່ງໃສ ແລະ ສາມາດກວດສອບໄດ້;
5. ລາຍງານຢ່າງເປັນລາຍລັກອັກສອນ ກ່ຽວກັບສ່ວນປະກອບ, ສ່ວນປະສົມ, ຈຳນວນຜະລິດຕະພັນຢາສູບ ຂອງແຕ່ລະຍີ່ຫໍ້, ການຕະຫຼາດຢາສູບ, ຄ່າໃຊ້ຈ່າຍໃນການຕະຫຼາດ ແລະ ສານທີ່ເກີດຈາກການເຜົາໄໝ້ ພ້ອມດ້ວຍຕົວຢ່າງໃຫ້ກະຊວງການສາທາລະນະສຸກ ສອງຄັ້ງຕໍ່ປີ ເພື່ອດຳເນີນການກວດສອບ ແລະ ເປີດເຜີຍຕໍ່ປະຊາຊົນ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 (ປັບປຸງ) ພັນທະຂອງຜູ້ຈໍາໜ່າຍ ແລະ ຊື້ ຂາຍ**

ຜູ້ຈໍາໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ຂໍອະນຸຍາດ ກ່ຽວກັບການຈໍາໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ຮັບປະກັນໃຫ້ມີສະຖານທີ່ ທີ່ເໝາະສົມໃນການຈໍາໜ່າຍ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ;
4. ຂາຍຜະລິດຕະພັນຢາສູບທີ່ມີ ຄໍາເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີ ຜະລິດ, ຕິດສະແຕມອາກອນ ແລະ/ຫຼື ສະແຕມພາສີ ຢ່າງຖືກຕ້ອງ ຕາມລະບຽບການເທົ່ານັ້ນ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 22 (ປັບປຸງ) ພັນທະຂອງຜູ້ຊົມໃຊ້ຜະລິດຕະພັນຢາສູບ**

ຜູ້ຊົມໃຊ້ຜະລິດຕະພັນຢາສູບ ມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ຢ່າງເຂັ້ມງວດ;
2. ສູບຢາໃນສະຖານທີ່ອະນຸຍາດໃຫ້ສູບ;
3. ເຄົາລົບສິດຂອງຜູ້ບໍ່ສູບຢາ ແລະ ຜູ້ຢູ່ໃກ້ຄຽງ ດ້ວຍການບໍ່ເຮັດໃຫ້ຜູ້ອື່ນ ໄດ້ຮັບຄວັນຢາສູບຂອງຕົນ;
4. ປົກປັກຮັກສາສິ່ງແວດລ້ອມ ໂດຍບໍ່ຖິ້ມກົ້ນ ຫຼື ກອກຢາສູບ ຊະຊາຍ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 3
## ການບັນຈຸ, ການຫຸ້ມຫໍ່,
## ຄໍາເຕືອນສຸຂະພາບ ແລະ ສະຫຼາກ ຜະລິດຕະພັນຢາສູບ

**ມາດຕາ 23 (ປັບປຸງ) ການບັນຈຸ**

ການບັນຈຸຜະລິດຕະພັນຢາສູບ ໃຫ້ບັນຈຸຊາວກອກ ຕໍ່ໜຶ່ງຊອງ, ສິບຊອງ ຕໍ່ໜຶ່ງຄຸດ ແລະ ຫ້າສິບຄຸດ ຕໍ່ໜຶ່ງຫີບ, ຍົກເວັ້ນ ຢາສູບຊີກາ ແລະ ຢາສູບອື່ນ.

ສໍາລັບ ມາດຕະຖານຂອງ ຊອງ, ຄຸດ, ຫີບ ແລະ ກອກ ຢາສູບ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 24 (ປັບປຸງ) ການຫຸ້ມຫໍ່**

ການຫຸ້ມຫໍ່ ຊອງ, ຄຸດ ຜະລິດຕະພັນຢາສູບ ທີ່ຜະລິດຢູ່ພາຍໃນ ແລະ ນໍາເຂົ້າຈາກຕ່າງປະເທດ ຕ້ອງປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ແລະ ມີຄໍາເຕືອນສຸຂະພາບ, ສະຫຼາກ ຕາມການກໍານົດຂອງກະຊວງສາທາລະນະສຸກ.

**ມາດຕາ 25 (ປັບປຸງ) ຄຳເຕືອນສຸຂະພາບ**

ຄຳເຕືອນສຸຂະພາບ ປະກອບດ້ວຍ ຄຳເຕືອນສຸຂະພາບທີ່ເປັນ ຮູບພາບ ແລະ ຂໍ້ຄວາມ.

ຄຳເຕືອນສຸຂະພາບທີ່ເປັນຮູບພາບ ແມ່ນ ຮູບພາບທີ່ສະແດງເຖິງຜົນຮ້າຍ ຫຼື ພະຍາດທີ່ເກີດຈາກການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ ແລະ ຜົນສະທ້ອນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງຕ້ອງພິມໃສ່ທາງນອກເບື້ອງເທິງຂອງດ້ານໜ້າ, ຫຼັງ ແລະ ປຸ່ມຂໍ້ຄວາມຂອງແຕ່ລະຊອງ, ຕຸດ ໃຫ້ເຫັນໄດ້ ຢ່າງຈະແຈ້ງ ເພື່ອສະແດງໃຫ້ຜູ້ຊົມໃຊ້ຜະລິດຕະພັນຢາສູບຮັບຮູ້.

ຄຳເຕືອນສຸຂະພາບທີ່ເປັນຂໍ້ຄວາມ ແມ່ນ ຄຳເຕືອນທີ່ອະທິບາຍຄວາມໝາຍຂອງແຕ່ລະຮູບພາບ ກ່ຽວກັບຜົນຮ້າຍ ຫຼື ພະຍາດທີ່ເກີດຈາກການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ ແລະ ຜົນສະທ້ອນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ຊຶ່ງຕ້ອງພິມໃສ່ຂອບເທິງສຸດຂອງແຕ່ລະ ຊອງ, ຕຸດ ແລະ ຢູ່ດ້ານເທິງຂອງຮູບພາບ. ຄຳເຕືອນສຸຂະພາບທີ່ເປັນຂໍ້ຄວາມ ຕ້ອງພິມເປັນພາສາລາວ.

ການພິມຄຳເຕືອນສຸຂະພາບເປັນ ຮູບພາບ ແລະ ຂໍ້ຄວາມ ຕ້ອງມີຂະໜາດ, ຕຳແໜ່ງຂອງຕົວອັກສອນ, ຄ່າຄວາມເຂັ້ມຂອງສີ, ສັນຍາລັກ ແລະ ການສະແດງເຄື່ອງໝາຍການຄ້າ ຕາມລະບຽບການທີ່ກະຊວງສາທາລະນະສຸກ ວາງອອກໃນແຕ່ລະໄລຍະ.

**ມາດຕາ 26 (ປັບປຸງ) ສະຫຼາກ**

ສະຫຼາກ ແມ່ນ ຂໍ້ຄວາມທີ່ພິມໃສ່ດ້ານຂ້າງທາງນອກຂອງແຕ່ລະ ຊອງ ແລະ ຕຸດ ເພື່ອສະແດງໃຫ້ຜູ້ຊົມໃຊ້ຜະລິດຕະພັນຢາສູບຮັບຮູ້.

ສະຫຼາກຜະລິດຕະພັນຢາສູບ ທີ່ຜະລິດຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ຕ້ອງພິມຂໍ້ຄວາມເປັນພາສາລາວ ກ່ຽວກັບສານເຄມີໃນຄວັນຢາສູບ ຫຼື ຜົນຮ້າຍຕໍ່ສຸຂະພາບ ເພື່ອສະແດງໃຫ້ຜູ້ຊົມໃຊ້ຜະລິດຕະພັນຢາສູບຮັບຮູ້.

ສຳລັບເນື້ອໃນ ແລະ ຮູບແບບ ຂອງສະຫຼາກ ໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງສາທາລະນະສຸກ ກຳນົດອອກໃນແຕ່ລະໄລຍະ.

## ໝວດທີ 4
## ລາຄາ ແລະ ອາກອນ ຢາສູບ

**ມາດຕາ 27 (ປັບປຸງ) ລາຄາຢາສູບ**

ລາຄາຢາສູບ ຕ້ອງໄດ້ຮັບການກຳນົດໂດຍຜ່ານນະໂຍບາຍອາກອນໃນແຕ່ລະໄລຍະ ເພື່ອຫຼຸດຜ່ອນການຊົມໃຊ້ຢາສູບຢູ່ໃນສັງຄົມ.

ຂະແໜງການທີ່ກ່ຽວຂ້ອງຂອງລັດ ມີໜ້າທີ່ຕິດຕາມ, ເກັບກຳຂໍ້ມູນ ກ່ຽວກັບລາຄາຢາສູບໃນແຕ່ລະໄລຍະ ເພື່ອປັບປຸງນະໂຍບາຍອາກອນຢາສູບໃຫ້ສົມເຫດສົມຜົນ.

**ມາດຕາ 28 (ປັບປຸງ) ອາກອນຢາສູບ**

ອາກອນຢາສູບ ຕ້ອງເພີ່ມຂຶ້ນໃນແຕ່ລະໄລຍະ ໂດຍສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ຄວາມສາມາດຊື້ຢາສູບ, ອັດຕາເງິນເຟີ້ ແລະ ຂໍ້ແນະນຳຂອງສົນທິສັນຍາວ່າດ້ວຍການຄວບຄຸມຢາສູບ ເພື່ອຫຼຸດຜ່ອນການຊົມໃຊ້ຢາສູບ.

# ພາກທີ IV
# ການປົກປ້ອງສຸຂະພາບຈາກຜົນຮ້າຍຂອງຢາສູບ
## ໝວດທີ 1
## ການສຶກສາ, ຄົ້ນຄວ້າ, ວິໄຈ, ການໂຄສະນາ, ສຸຂະສຶກສາ ແລະ ການເຂົ້າເຖິງຂໍ້ມູນ ຂ່າວສານ

**ມາດຕາ 29 (ໃໝ່) ການສຶກສາ, ຄົ້ນຄວ້າ ແລະ ວິໄຈ**

ການສຶກສາ, ຄົ້ນຄວ້າ ແລະ ວິໄຈ ແມ່ນ ຂະບວນການເກັບກຳ, ລວບລວມ ແລະ ວິເຄາະ ຂໍ້ມູນຢ່າງເປັນລະບົບ ກ່ຽວກັບປັດໄຈ ຫຼື ສາເຫດຕົ້ນຕໍ ທີ່ພາໃຫ້ເກີດຜົນຮ້າຍຂອງຢາສູບ ຕໍ່ ສຸຂະພາບ, ຄອບຄົວ, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ

ກະຊວງສາທາລະນະສຸກ ເປັນເຈົ້າການປະສານສົມທົບກັບ ຂະແໜງການອື່ນທີ່ກ່ຽວຂ້ອງ ດຳເນີນການສຶກສາ, ຄົ້ນຄວ້າ ແລະ ວິໄຈ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ, ການໂຄສະນາ, ການສົ່ງເສີມ ຜະລິດຕະພັນຢາສູບ ແລະ ການອຸປະຖຳຈາກອຸດສາຫະກຳຢາສູບ, ສະພາບການສູບຢາ, ຄຳເຕືອນສຸຂະພາບ, ໂຄງສ້າງລາຄາຕົ້ນທຶນຢາສູບ, ພາສີ ແລະ ອາກອນຢາສູບ, ຄວາມສາມາດຊື້ຢາສູບ, ຄ່າໃຊ້ຈ່າຍໃນການປິ່ນປົວພະຍາດທີ່ເກີດຈາກຢາສູບ, ຢາສູບນອກລະບົບ, ຜົນກະທົບທີ່ເກີດຈາກຕົ້ນຢາສູບ, ຜົນກະທົບຕໍ່ຊາວກະສິກອນປູກຕົ້ນຢາສູບ, ການປູກພືດເສດຖະກິດຊະນິດອື່ນທົດແທນການປູກຕົ້ນຢາສູບ ແລະ ອື່ນໆ.

**ມາດຕາ 30 (ປັບປຸງ) ການໂຄສະນາ ແລະ ສຸຂະສຶກສາ**

ການໂຄສະນາ ແລະ ສຸຂະສຶກສາ ແມ່ນ ວິທີການປູກລະດົມ, ໃຫ້ຄວາມຮູ້, ສະໜອງຂໍ້ມູນຂ່າວສານ ດ້ານວິທະຍາສາດ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ໂດຍຜ່ານສື່ມວນຊົນ ແລະ ວິທີການອື່ນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ໂຄສະນາ ແລະ ສຸຂະສຶກສາ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ທົ່ວສັງຄົມ ໂດຍສະເພາະ ແມ່ຍິງ, ເດັກ, ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ ເພື່ອໃຫ້ຫ່າງໄກຈາກການຊົມໃຊ້ຢາສູບ.

**ມາດຕາ 31 (ປັບປຸງ) ການເຂົ້າເຖິງ ຂໍ້ມູນ ຂ່າວສານ**

ພົນລະເມືອງທຸກຄົນ ມີສິດເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບການຄວບຄຸມຢາສູບ ເປັນຕົ້ນ ຜົນຮ້າຍຂອງການສູບຢາ ແລະ ການໄດ້ຮັບຄວັນຢາສູບມືສອງ, ຜົນດີຂອງການບໍ່ສູບຢາ, ການອອກຢາສູບ ແລະ ສິ່ງແວດລ້ອມທີ່ປອດຄວັນຢາສູບ.

## ໝວດທີ 2
## ສະຖານທີ່ຫ້າມສູບຢາ

**ມາດຕາ 32 (ປັບປຸງ) ສະຖານທີ່ຫ້າມສູບຢາທັງພາຍໃນ ແລະ ນອກອາຄານ**

ສະຖານທີ່ຫ້າມສູບຢາທັງພາຍໃນ ແລະ ນອກອາຄານ ມີ ດັ່ງນີ້:

1. ສະຖານທີ່ບໍລິການສາທາລະນະສຸກ;
2. ສະຖານການສຶກສາ;
3. ສະຖານທີ່ຫຼິ້ນກິລາ;
4. ພາຍໃນພາຫະນະໂດຍສານສາທາລະນະທາງບົກ, ທາງນ້ຳ ແລະ ທາງອາກາດ;
5. ສະຖານທີ່ມີເຊື້ອໄຟ ແລະ ວັດຖຸອັນຕະລາຍ;
6. ສວນສາທາລະນະ, ຫໍພິພິທະພັນ, ຫໍວັດທະນະທຳ, ໂຮງມະຫໍລະສົບ, ໂຮງລະຄອນ, ໂຮງກາຍະສິນ, ໂຮງຮູບເງົາ, ສາສະນະສະຖານ, ປູສະນີຍະສະຖານ, ອະນຸສອນສະຖານ ແລະ ສະໂມສອນ;
7. ສະຖານທີ່ອື່ນ ທີ່ມີປ້າຍຫ້າມສູບຢາ ແລະ ສະຖານທີ່ປອດຄວັນຢາສູບ.

**ມາດຕາ 33 (ປັບປຸງ) ສະຖານທີ່ຫ້າມສູບຢາສະເພາະພາຍໃນອາຄານ**

ສະຖານທີ່ຫ້າມສູບຢາສະເພາະພາຍໃນອາຄານ ມີ ດັ່ງນີ້:

1. ສຳນັກງານຂອງລັດ ແລະ ເອກະຊົນ;
2. ຕຶກອາຄານຢູ່ໃນສະຖານີລົດໂດຍສານ, ລົດໄຟ, ສະໜາມບິນ, ທ່າເຮືອ ແລະ ສະຖານທີ່ສ່ວນລວມອື່ນ;
3. ສູນການຄ້າ, ຮ້ານສັບພະສິນຄ້າ, ຕະຫຼາດ ແລະ ຮ້ານຂາຍເຄື່ອງທົ່ວໄປ;
4. ຕຶກອາຄານຢູ່ໃນສະຖານທີ່ທ່ອງທ່ຽວ, ສວນສັດ ແລະ ຊຸມຊົນແອອັດ;
5. ເຮືອນພັກ, ໂຮງແຮມ, ຮ້ານອາຫານ, ຮ້ານກິນດື່ມ, ຮ້ານຄາລາໂອເກະ ແລະ ຮ້ານບັນເທີງ;
6. ຮ້ານນວດ, ສະປາ, ອົບຢາ, ຕັດຜົມ ແລະ ເສີມສວຍ;
7. ສະຖານທີ່ອື່ນ ຕາມການກຳນົດຂອງລັດຖະບານ ແລະ/ຫຼື ເຈົ້າຂອງສະຖານທີ່.

ສະຖານທີ່ດັ່ງກ່າວເທິງນີ້ ຕ້ອງຈັດສັນໃຫ້ມີບ່ອນສູບຢາສະເພາະຢູ່ນອກອາຄານ ຊຶ່ງຫ່າງຈາກຕົວອາຄານ ຢ່າງໜ້ອຍ ສິບແມັດ ໂດຍກຳນົດເນື້ອທີ່ບໍ່ເກີນ ຫ້າ ຕາແມັດ, ມີຖາດເຂ່ຍຂີ້ກອກຢາ ແລະ ບໍ່ໃຫ້ມີຫຼັງຄາ.

ສະຖານທີ່ ທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ເຈົ້າຂອງສະຖານທີ່ສາມາດກຳນົດໃຫ້ເປັນສະຖານທີ່ຫ້າມສູບຢາ ທັງພາຍໃນ ແລະ ນອກອາຄານ ກໍໄດ້.

## ພາກທີ V
## ການແກ້ໄຂຜົນຮ້າຍຂອງຢາສູບ

**ມາດຕາ 34 (ປັບປຸງ) ການປຸກລະດົມໃຫ້ເລີກຢາສູບ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ປຸກລະດົມໃຫ້ຜູ້ສູບຢາ ຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງຢາສູບ ຕໍ່ ຕົນເອງ, ຄອບຄົວ, ສັງຄົມ ແລະ ເສດຖະກິດ ເພື່ອໃຫ້ຜູ້ກ່ຽວຫຼຸດຜ່ອນ ແລະ ເລີກຢາສູບ.

**ມາດຕາ 35 ການບຳບັດ ແລະ ປິ່ນປົວ**

ຜູ້ຕິດຢາສູບ, ຜູ້ໄດ້ຮັບຜົນຮ້າຍຈາກຢາສູບ ຕ້ອງສະໝັກໃຈເຂົ້າບຳບັດ ແລະ ປິ່ນປົວ ດ້ວຍການເອົາໃຈໃສ່ ແລະ ຊ່ວຍເຫຼືອຈາກ ຄອບຄົວ, ຊຸມຊົນ, ສັງຄົມ ແລະ ໂຮງໝໍ.

**ມາດຕາ 36 (ປັບປຸງ) ການຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ**

ການຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ມີ ດັ່ງນີ້:

1. ອະທິບາຍ, ຊີ້ແຈງຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ;
2. ແນະນຳຜົນດີຂອງການບໍ່ຊົມໃຊ້ຢາສູບ, ໃຫ້ຄຳປຶກສາ ແລະ ແນະນຳວິທີການອອກຢາສູບ;
3. ຕິດຕາມຄວາມຄືບໜ້າຂອງການອອກຢາສູບ;
4. ຈັດກິດຈະກຳຕ່າງໆ ເພື່ອສົ່ງເສີມການອອກຢາສູບ;
5. ນຳໃຊ້ວິທີອື່ນ ທີ່ເຫັນວ່າມີຄວາມເໝາະສົມ.

ໂຮງໝໍ ສູນກາງ, ພາກ, ຂັ້ນ ແຂວງ, ເມືອງ ແລະ ໂຮງໝໍນ້ອຍ ຕ້ອງເຊື່ອມສານວຽກງານໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອຜູ້ທີ່ຕ້ອງການອອກຢາສູບ ເຂົ້າໃນໂຄງປະກອບການບໍລິການສາທາລະນະສຸກ ທີ່ມີຢູ່.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດໃຫ້ຄຳປຶກສາ ແລະ ຊ່ວຍເຫຼືອ ຜູ້ທີ່ຕ້ອງການອອກຢາສູບ ໂດຍບໍ່ເສຍຄ່າ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 37 ການຊ່ວຍເຫຼືອຜູ້ໄດ້ຮັບຄວັນຢາສູບ**

ຜູ້ໄດ້ຮັບຄວັນຢາສູບ ຕ້ອງໄດ້ຮັບການຊ່ວຍເຫຼືອ ດ້ວຍການແນະນຳກ່ຽວກັບຜົນຮ້າຍຂອງຄວັນຢາສູບ, ເປັນເຈົ້າການປົກປ້ອງຕົນເອງ ດ້ວຍການອອກຫ່າງຈາກຜູ້ສູບຢາ ຫຼື ມີສິດສະເໜີໃຫ້ຜູ້ສູບຢາໄປສູບຢູ່ບ່ອນອື່ນທີ່ຫ່າງຈາກຕົນ. ເມື່ອໄດ້ຮັບຜົນຮ້າຍ, ເຈັບເປັນຈາກຄວັນຢາສູບແລ້ວ ຜູ້ກ່ຽວກໍມີສິດໄດ້ຮັບການຊ່ວຍເຫຼືອ, ເບິ່ງແຍງ ແລະ ປິ່ນປົວ ຕາມເງື່ອນໄຂຕົວຈິງ.

## ພາກທີ VI
## ຄວາມຮັບຜິດຊອບກ່ຽວກັບການຄວບຄຸມຢາສູບ

**ມາດຕາ 38 (ປັບປຸງ) ຄວາມຮັບຜິດຊອບຂອງລັດ**

ລັດ ມີຄວາມຮັບຜິດຊອບໃນການຄວບຄຸມ, ຄຸ້ມຄອງ, ຕິດຕາມກວດກາ ວຽກງານຄວບຄຸມຢາສູບ ດ້ວຍການວາງນະໂຍບາຍ, ກົດໝາຍ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ, ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ແລະ ປິ່ນປົວ ຜູ້ໄດ້ຮັບຜົນຮ້າຍຈາກການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

**ມາດຕາ 39 (ປັບປຸງ) ຄວາມຮັບຜິດຊອບຂອງການຈັດຕັ້ງພາກລັດ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກຳນົດຈຸດປະສານງານ, ຕິດຕາມກວດກາ ວຽກງານຄວບຄຸມຢາສູບ ໂດຍປະສານສົມທົບກັບຄະນະກຳມະການເພື່ອການຄວບຄຸມຢາສູບແຕ່ລະຂັ້ນ.

**ມາດຕາ 40 (ໃໝ່) ຄວາມຮັບຜິດຊອບຂອງພາກເອກະຊົນ**

ພາກເອກະຊົນ ມີຄວາມຮັບຜິດຊອບ ໃນການປະກອບສ່ວນຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ເປັນຕົ້ນ ການໂຄສະນາ, ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ, ຈັດສະຖານທີ່ຫ້າມສູບຢາ, ຈັດບ່ອນສະເພາະໃຫ້ສູບຢາ ແລະ ໃຫ້ການຮ່ວມມືກັບອົງການທີ່ກ່ຽວຂ້ອງຂອງລັດແຕ່ລະຂັ້ນ.

**ມາດຕາ 41 (ປັບປຸງ) ຄວາມຮັບຜິດຊອບຂອງຊຸມຊົນ ແລະ ສັງຄົມ**

ຊຸມຊົນ ແລະ ສັງຄົມ ມີຄວາມຮັບຜິດຊອບຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄວບຄຸມຢາສູບ ເປັນຕົ້ນ ການໂຄສະນາ ເຜີຍແຜ່, ປຸກລະດົມ ໃຫ້ທຸກຊັ້ນຄົນເຫັນໄດ້ຜົນຮ້າຍຂອງການຊົມໃຊ້ຢາສູບ, ການໄດ້ຮັບຄວັນຢາສູບມືສອງ, ການສ້າງຄ່ານິຍົມໃນການບໍ່ຊົມໃຊ້ຢາສູບ, ສ້າງໃຫ້ຊຸມຊົນປອດຄວັນຢາສູບ ແລະ ຊຸກຍູ້ໃຫ້ຜູ້ສູບປາອອກຢາສູບ.

**ມາດຕາ 42 (ປັບປຸງ) ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີບົດບາດສຳຄັນ ແລະ ມີຄວາມຮັບຜິດຊອບຮ່ວມກັນໃນການສຶກສາອົບຮົມ, ລະດົມໃຫ້ສະມາຊິກຄອບຄົວບໍ່ຊົມໃຊ້ຢາສູບ, ອອກຢາສູບ, ໃຫ້ຄຳແນະນຳແກ່ສະມາຊິກຄອບຄົວເຂົ້າໃຈ, ຮັບຮູ້ເຖິງຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ ເພື່ອໃຫ້ເປັນຄອບຄົວຕົວແບບປອດຄວັນຢາສູບ.

**ມາດຕາ 43 (ປັບປຸງ) ຄວາມຮັບຜິດຊອບຂອງບຸກຄົນ**

ບຸກຄົນ ມີຄວາມຮັບຜິດຊອບ ເປັນເຈົ້າຕົນເອງໃນການຫ່າງໄກຈາກຢາສູບ ແລະ ປົກປ້ອງຕົນເອງຈາກການໄດ້ຮັບຄວັນຢາສູບມືສອງ, ເປັນແບບຢ່າງ ແກ່ບຸກຄົນອື່ນໃນການບໍ່ຊົມໃຊ້ຢາສູບ ແລະ ອອກຢາສູບ, ຫຼີກເວັ້ນການຊວນເຊື່ອໃຫ້ຊົມໃຊ້ຢາສູບ, ສູບຢາໃນສະຖານທີ່ອະນຸຍາດໃຫ້ສູບ, ປະກອບສ່ວນ ແລະ ເຂົ້າຮ່ວມໃນກິດຈະກຳຄວບຄຸມຢາສູບ, ໂຄສະນາ ເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບຜົນຮ້າຍຂອງການຊົມໃຊ້ຢາສູບ ແລະ ການໄດ້ຮັບຄວັນຢາສູບມືສອງ.

## ພາກທີ VII
## ກອງທຶນຄວບຄຸມຢາສູບ

**ມາດຕາ 44 (ປັບປຸງ) ກອງທຶນຄວບຄຸມຢາສູບ**

ກອງທຶນຄວບຄຸມຢາສູບ ແມ່ນ ກອງທຶນສົ່ງເສີມສຸຂະພາບ ທີ່ລັດຖະບານ ແຫ່ງ ສປປ ລາວ ສ້າງຕັ້ງຂຶ້ນ ເພື່ອເຜີຍແຜ່ຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຊຶ່ງຢູ່ພາຍໃຕ້ການຊີ້ນຳໂດຍກົງຂອງຄະນະກຳມະການແຫ່ງຊາດເພື່ອການຄວບຄຸມຢາສູບ ທີ່ມີໜ້າທີ່ ໃນການຄຸ້ມຄອງການເຄື່ອນໄຫວວຽກງານຂອງກອງທຶນ ໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ.

ລັດ ອະນຸຍາດ ໃຫ້ສ້າງຕັ້ງກອງທຶນຄວບຄຸມຢາສູບ ເພື່ອຮັບໃຊ້ວຽກງານຄວບຄຸມຢາສູບ.

**ມາດຕາ 45 (ປັບປຸງ) ແຫຼ່ງຂອງກອງທຶນຄວບຄຸມຢາສູບ**

ກອງທຶນຄວບຄຸມຢາສູບ ໄດ້ມາຈາກແຫຼ່ງ ຕົ້ນຕໍ ດັ່ງນີ້:

1. ງົບປະມານຂອງລັດ;
2. ສອງສ່ວນຮ້ອຍ ເກັບເພີ່ມຈາກອາກອນຊົມໃຊ້ຜະລິດຕະພັນຢາສູບ ທີ່ລັດຈັດເກັບ ແລະ ເພີ່ມຂຶ້ນໜຶ່ງສ່ວນຮ້ອຍ ໃນທຸກ ສອງປີ;
3. ສອງຮ້ອຍກີບ ຕໍ່ຊອງ ຂອງຜະລິດຕະພັນຢາສູບ ທຸກປະເພດທີ່ຜະລິດພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ ແລະ ເພີ່ມຂຶ້ນ ສອງຮ້ອຍກີບ ຕໍ່ຊອງ ໃນທຸກ ສອງປີ;

4. ການບໍລິຈາກຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນທັງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຍົກເວັ້ນການບໍລິຈາກ ແລະ/ຫຼື ອຸປະຖໍາຈາກອຸດສາຫະກໍາຢາສູບ ແລະ ຜູ້ປະກອບການ;

5. ການເຄື່ອນໄຫວກິດຈະກໍາຫາລາຍໄດ້ທີ່ຖືກຕ້ອງ ເພື່ອວຽກງານຄວບຄຸມຢາສູບ.

**ມາດຕາ 46 (ປັບປຸງ) ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນຄວບຄຸມຢາສູບ**

ກະຊວງສາທາລະນະສຸກ ເປັນຜູ້ຄຸ້ມຄອງ, ບໍລິຫານກອງທຶນຄວບຄຸມຢາສູບ ພາຍໃຕ້ການຊີ້ນໍາຂອງຄະນະກໍາມະການແຫ່ງຊາດເພື່ອການຄວບຄຸມຢາສູບ.

ກອງທຶນຄວບຄຸມຢາສູບ ໃຫ້ນໍາໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການເຄື່ອນໄຫວວຽກງານຂອງຄະນະກໍາມະການເພື່ອການຄວບຄຸມຢາສູບ ແຕ່ລະຂັ້ນ ແລະ ການຄຸ້ມຄອງບໍລິຫານກອງທຶນ;

2. ການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;

3. ການປະກອບສ່ວນເຂົ້າໃນການປັບປຸງຄຸນນະພາບການບໍລິການສາທາລະນະສຸກ;

4. ການປະກອບສ່ວນເຂົ້າໃນກອງທຶນປະກັນສຸຂະພາບແຫ່ງຊາດ.

ການນໍາໃຊ້ກອງທຶນຄວບຄຸມຢາສູບຂອງພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມແຜນວຽກ ແລະ ແຜນກິດຈະກໍາ ຢ່າງເຂັ້ມງວດ.

ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຜ່ານລະບົບບັນຊີຂອງຄັງເງິນແຫ່ງຊາດ, ລົງບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານການບັນຊີແຫ່ງລັດ.

ສໍາລັບ ລາຍລະອຽດກ່ຽວກັບການຄຸ້ມຄອງບໍລິຫານ ແລະ ນໍາໃຊ້ກອງທຶນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 47 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ຄອບຄົວ, ຊຸມຊົນ, ສັງຄົມ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ສະໜັບສະໜູນການໂຄສະນາ ແລະ ສົ່ງເສີມໃຫ້ຊົມໃຊ້ຜະລິດຕະພັນຢາສູບ;

2. ສູບຢາໃນສະຖານທີ່ຫ້າມສູບ;

3. ຊົມໃຊ້ຜະລິດຕະພັນຢາສູບຮູບແບບໃໝ່ ເປັນຕົ້ນ ຢາສູບໄຟຟ້າ, ຢາສູບລະເຫີຍອາຍ, ຢາສູບຊີຊາ ຫຼື ບາຣາກູ;

4. ໃຫ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ຊົມໃຊ້ຢາສູບ;

5. ຊັກຊວນເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ຊົມໃຊ້ຢາສູບ ແລະ ຊື້ ຂາຍ ຜະລິດຕະພັນຢາສູບ;

6. ເຂົ້າຮ່ວມການຜະລິດ, ນໍາເຂົ້າ, ສົ່ງອອກ, ຊື້ ຫຼື ຂາຍ ຜະລິດຕະພັນຢາສູບ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

7. ຮັບເອົາການອຸປະຖໍາ ແລະ ສະໜັບສະໜູນຈາກບໍລິສັດຢາສູບ, ຜູ້ປະກອບການໂດຍທາງກົງ ແລະ ທາງອ້ອມ ທີ່ເປັນເງິນສົດ, ການກູ້ຢືມ, ລາງວັນ, ທຶນສໍາລັບການຄົ້ນຄວ້າ, ວິໄຈ, ທຶນການສຶກສາ,

ພາຫະນະ, ວັດຖຸປະກອບ, ເຄື່ອງຄ້ອນ, ຂອງຝາກ, ຂອງຂວັນ ລວມທັງ ການຮັບຮອງ ຫຼື ເຂົ້າຮ່ວມກິດຈະກຳ ທີ່ສະແດງເຖິງຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດຢາສູບ ເພື່ອຜົນປະໂຫຍດທາງດ້ານການຄ້າ, ຍົກເວັ້ນການປະຕິບັດພັນທະໃຫ້ແກ່ລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

8. ໂຄສະນາຜະລິດຕະພັນຢາສູບໃນທຸກຮູບແບບ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 48 (ປັບປຸງ) ຂໍ້ຫ້າມສຳລັບບໍລິສັດຢາສູບ ແລະ ຜູ້ປະກອບການ**

ຫ້າມ ບໍລິສັດຢາສູບ ແລະ ຜູ້ປະກອບການ ມີພຶດຕິກຳ ດັ່ງນີ້:

1. ຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບທີ່ບໍ່ມີຄຳເຕືອນສຸຂະພາບ ແລະ ສະຫຼາກ, ວັນ, ເດືອນ, ປີ ຜະລິດ, ສະແຕັມພາສີ, ອາກອນ, ຢາສູບນອກລະບົບ, ເຖື່ອນ, ເສຍຄຸນ, ຜະລິດຕະພັນຢາສູບຮຽນແບບ ຫຼື ປອມ;

2. ຜະລິດ, ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຊື້ ຂາຍ ຜະລິດຕະພັນຢາສູບຮູບແບບໃໝ່ ເປັນຕົ້ນ ຢາສູບໄຟຟ້າ, ຢາສູບລະເຫີຍອາຍ, ຢາສູບຊີຊາ ຫຼື ບາຣາກຸ;

3. ຜະລິດຢາສູບທີ່ບັນຈຸຫຼູດ ຫຼື ເກີນ ຊາວກອກ ຕໍ່ໜຶ່ງຊອງ, ສິບຊອງ ຕໍ່ໜຶ່ງດູດ, ຫ້າສິບດູດ ຕໍ່ໜຶ່ງຫີບ;

4. ຂາຍຜະລິດຕະພັນຢາສູບ ໂດຍຜ່ານທາງສື່ເອເລັກໂຕຣນິກ ຫຼື ສື່ສັງຄົມອອນລາຍ;

5. ຂາຍຜະລິດຕະພັນຢາສູບໂດຍແຈກ, ແຖມຜະລິດຕະພັນຢາສູບຕົວຢ່າງ, ຫຼຸດລາຄາ, ໃຫ້ລ້າ, ແລກປ່ຽນຜະລິດຕະພັນຢາສູບ ກັບສິນຄ້າອື່ນ ຫຼື ໃຫ້ຜົນປະໂຫຍດອື່ນ;

6. ຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ;

7. ໂຄສະນາຜະລິດຕະພັນຢາສູບ ທຸກຮູບແບບ ທີ່ເປັນການຊຸກຍູ້, ສົ່ງເສີມການສູບຢາ, ການຈຳໜ່າຍ, ການຊື້ ແລະ ການຂາຍ ຜະລິດຕະພັນຢາສູບ ລວມທັງສະແດງຂໍ້ຄວາມ ຫຼື ສັນຍາລັກ ເພື່ອປຸກລະດົມໃຫ້ຊົມໃຊ້ຜະລິດຕະພັນຢາສູບ;

8. ອຸປະຖຳ, ສະໜັບສະໜູນ ແລະ ຈັດກິດຈະກຳສະແດງຄວາມຮັບຜິດຊອບຕໍ່ສັງຄົມ ເພື່ອຜົນປະໂຫຍດໃຫ້ແກ່ທຸລະກິດຢາສູບ;

9. ແຈກບັດເຂົ້າຊົມການແຂ່ງຂັນກິລາ, ສະແດງສິລະປະ, ວັນນະຄະດີ ຫຼື ກິດຈະກຳອື່ນ, ໃຫ້ບໍລິການກິດຈະກຳທາງສັງຄົມ, ສ່ຽງໂຊກ, ຊິງລາງວັນ ຫຼື ຜົນປະໂຫຍດອື່ນ ເພື່ອເປັນການຕອບແທນແກ່ຜູ້ຊື້ຜະລິດຕະພັນຢາສູບ ຫຼື ຜູ້ນຳເອົາສິ່ງຫຸ້ມຫໍ່ ຫຼື ສະຫຼາກ ຫຼື ສິ່ງຂອງອື່ນ ກ່ຽວກັບຜະລິດຕະພັນຢາສູບມາແລກປ່ຽນ ຫຼື ແລກຊື້;

10. ແຈກຜະລິດຕະພັນຢາສູບ ໃຫ້ທົດລອງສູບຢາ ໂດຍບໍ່ເສຍຄ່າ ເພື່ອເປັນການຈູງໃຈໃຫ້ປະຊາຊົນບໍລິໂພກຜະລິດຕະພັນຢາສູບ;

11. ນຳໃຊ້ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ຊື້ ຂາຍ ຜະລິດຕະພັນຢາສູບ;

12. ເຮັດໃຫ້ຜູ້ຊົມໃຊ້ເກີດຄວາມເຂົ້າໃຈຜິດຕໍ່ຄຸນລັກສະນະຂອງຜະລິດຕະພັນຢາສູບ ເຊັ່ນ ເຄື່ອງໝາຍການຄ້າ, ຮູບແບບ, ສີສັນ ຫຼື ສັນຍາລັກອື່ນ;

13. ໃຫ້ສິນບົນແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

14. ແຊກແຊງການພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ແລະ ເອກະສານທາງດ້ານວິຊາການຂອງລັດໃນທຸກຂັ້ນ;

15. ບັງຄັບ, ນາບຂູ່, ຂັດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

16. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 49 (ໃໝ່) ຂໍ້ຫ້າມສຳລັບຜູ້ຈຳໜ່າຍ, ຂາຍຍ່ອຍ ຜະລິດຕະພັນຢາສູບ**

ຫ້າມ ຜູ້ຈຳໜ່າຍ, ຂາຍຍ່ອຍ ຜະລິດຕະພັນຢາສູບ ມີພຶດຕິກຳ ດັ່ງນີ້:

1. ວາງຂາຍ ຫຼື ຍິນຍອມ ໃຫ້ວາງຂາຍຜະລິດຕະພັນຢາສູບ ຢ່າງເປີດເຜີຍ, ສະແດງຍີ່ຫໍ້ ຫຼື ລາຄາຂອງຜະລິດຕະພັນຢາສູບ;

2. ຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບຮູບແບບໃໝ່ ເປັນຕົ້ນ ຢາສູບໄຟຟ້າ, ຢາສູບລະເຫີຍອາຍ, ຢາສູບຊີຊາ ຫຼື ບາຣາກູ;

3. ຂາຍຜະລິດຕະພັນຢາສູບແບບແຍງລອຍ ຫຼື ເຄື່ອນທີ່;

4. ແບ່ງຂາຍຜະລິດຕະພັນຢາສູບເປັນກອກ;

5. ຈຳໜ່າຍ, ຂາຍ ຜະລິດຕະພັນຢາສູບ ຢູ່ສະຖານທີ່ບໍລິການສາທາລະນະສຸກ, ການສຶກສາ, ກິລາ, ຫ້ອງການລັດ ແລະ ເອກະຊົນ, ໂຮງມະຫໍລະສົບ, ຫໍວັດທະນະທຳ, ຫໍພິພິທະພັນ, ໂຮງລະຄອນ, ໂຮງກາຍະສິນ, ໂຮງຮູບເງົາ, ພາຍໃນພາຫະນະໂດຍສານສາທາລະນະ, ສາສະນະສະຖານ, ສວນສາທາລະນະ, ສວນສັດ, ສະໜາມເດັກຫຼິ້ນ, ງານບຸນປະເພນີ ແລະ ງານລ້ຽງຕ່າງໆ;

6. ຈຳໜ່າຍ, ຂາຍຜະລິດຕະພັນຢາສູບທີ່ເປັນການສົ່ງເສີມ ດ້ວຍການ ຫຼຸດລາຄາ, ແລກ, ແຈກ, ແຖມ, ເອົາຜະລິດຕະພັນໃຫ້ລ່າ ຫຼື ແລກປ່ຽນຜະລິດຕະພັນຢາສູບກັບສິນຄ້າອື່ນ;

7. ຈຳໜ່າຍ, ຂາຍຜະລິດຕະພັນຢາສູບ ໃຫ້ເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ ຫຼື ໃຫ້ເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ ຊື້ ຂາຍ ຜະລິດຕະພັນຢາສູບ;

8. ຂາຍຜະລິດຕະພັນຢາສູບ ດ້ວຍເຄື່ອງຈັກຂາຍຢາສູບແບບອັດຕະໂນມັດ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 50 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຜູ້ອື່ນ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

3. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານຄວບຄຸມຢາສູບທີ່ໄດ້ຮັບມອບໝາຍ;

4. ສົ່ງເສີມ, ປົກປ້ອງ ຫຼື ສົມຮູ້ຮ່ວມຄິດກັບຜູ້ປະກອບການທີ່ບໍ່ຖືກກົດໝາຍ;

5. ພົວພັນກັບບໍລິສັດຢາສູບ ຍົກເວັ້ນໃນກໍລະນີ ມີຄວາມຈຳເປັນບົນພື້ນຖານຄວາມໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້ ຕາມກົດໝາຍ;

6. ຮັບເອົາຕົວແທນບໍລິສັດຢາສູບ, ຜູ້ປະກອບການມາເປັນສະມາຊິກ ຫຼື ທີ່ປຶກສາ ຫຼື ປະກອບເປັນຄະນະກຳມະການເພື່ອການຄວບຄຸມຢາສູບ ລວມທັງການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຄວບຄຸມຢາສູບໃນທຸກຮູບແບບ;

7. ຮັບເອົາຮ່າງກົດໝາຍ, ລະບຽບການ, ນະໂຍບາຍ, ແຜນການ, ແຜນງານ ແລະ ເອກະສານ ທີ່ຕິດພັນກັບວຽກງານຄວບຄຸມຢາສູບ ທີ່ສະເໜີໂດຍບໍລິສັດຢາສູບ ຫຼື ຜູ້ຕາງໜ້າຂອງບໍລິສັດຢາສູບ, ຜູ້ປະກອບການ ລວມທັງພະນັກງານ-ລັດຖະກອນທີ່ລາອອກ, ຮັບບຳເນັດ ຫຼື ບຳນານ ໂດຍທາງກົງ ແລະ ທາງອ້ອມ;

8. ຮັບເອົາການອຸປະຖຳ ແລະ ສະໜັບສະໜູນຈາກບໍລິສັດຢາສູບ, ຜູ້ປະກອບການ ໂດຍທາງກົງ ແລະ ທາງອ້ອມ ເປັນເງິນສົດ, ກູ້, ລາງວັນ, ທຶນສຳລັບ ການຄົ້ນຄວ້າ, ວິໄຈ, ທຶນການສຶກສາ, ທັດສະນະສຶກ

ຊາ, ພາຫະນະ, ວັດຖຸປະກອນ, ເຄື່ອງກ້ອນ, ຂອງຝາກ, ຂອງຂວັນ ລວມທັງການອຸປະຖຳ ຫຼື ເຂົ້າຮ່ວມກິດຈະກຳທີ່ສະແດງເຖິງຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດຢາສູບ ເພື່ອຜົນປະໂຫຍດທາງດ້ານການຄ້າ ຍົກເວັ້ນການຈ່າຍພັນທະໃຫ້ແກ່ລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

໑. ອະນຸຍາດໃຫ້ ມີການໂຄສະນາ ແລະ ການສົ່ງເສີມຜະລິດຕະພັນຢາສູບໃນທຸກຮູບແບບ;

໑໐. ອະນຸຍາດໃຫ້ ພະນັກງານ ຫຼື ຜູ້ຕາງໜ້າບໍລິສັດຢາສູບເປັນທີ່ປຶກສາ ແລະ/ຫຼື ສຽງໃນກອງປະຊຸມ, ສົນທະນາ ແລະ ການພົວພັນອື່ນ ຮ່ວມກັບພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຂອງລັດ ເພື່ອນຳໄປໃຊ້ໃນຈຸດປະສົງທາງດ້ານການຄ້າ;

໑໑. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາວຽກງານຄວບຄຸມຢາສູບ
### ໝວດທີ 1
### ການຄຸ້ມຄອງວຽກງານຄວບຄຸມຢາສູບ

**ມາດຕາ 51 (ປັບປຸງ) ອົງການຄຸ້ມຄອງວຽກງານຄວບຄຸມຢາສູບ**

ລັດຖະບານຄຸ້ມຄອງວຽກງານຄວບຄຸມຢາສູບ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການ ແລະ ຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດໂດຍປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຄວບຄຸມຢາສູບ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ.

ເພື່ອໃຫ້ວຽກງານຄວບຄຸມຢາສູບ ດຳເນີນໄປຢ່າງມີປະສິດທິຜົນນັ້ນ ໄດ້ສ້າງຕັ້ງຄະນະກຳມະການເພື່ອການຄວບຄຸມຢາສູບຂຶ້ນ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການເພື່ອການຄວບຄຸມຢາສູບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 52 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄວບຄຸມຢາສູບ ເພື່ອສະເໜີລັດຖະບານພິຈາລະນາ;
2. ຈັດຕັ້ງ, ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການໃຫ້ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
4. ຊີ້ນຳ້ນຳພາການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ, ສຶກສາ, ຄົ້ນຄວ້າ ແລະ ວິໄຈ ກ່ຽວກັບວຽກງານຄວບຄຸມຢາສູບ;

5. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບໃນຂອບເຂດທົ່ວປະເທດ;

6. ກຳນົດກົນໄກການຄຸ້ມຄອງກອງທຶນຄວບຄຸມຢາສູບ;

7. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມຢາສູບ;

8. ສະໜັບສະໜູນການໃຫ້ຄຳແນະນຳ, ປຶກສາການອອກຢາສູບ, ການປິ່ນປົວ, ການບຳບັດຮັກສາ ແລະ ການຟື້ນຟູສຸຂະພາບຂອງຜູ້ຊົມໃຊ້ຢາສູບທີ່ຕ້ອງການອອກຢາສູບ;

9. ຊີ້ນຳໃນການເຊື່ອມສານວຽກງານໃຫ້ຄຳແນະນຳ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບພາຍໃນໂຮງໝໍສູນກາງ, ພາກ;

10. ສ້າງ, ບຳລຸງ, ຍົກລະດັບ, ສະໜອງ, ສັບຊ້ອນ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນກ່ຽວກັບວຽກງານຄວບຄຸມຢາສູບ;

11. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດນຳເຂົ້າ, ສົ່ງອອກ, ຈຳໜ່າຍ ຜະລິດຕະພັນຢາສູບ;

12. ສັງລວມຂໍ້ມູນ ຮ້ານຂາຍຍົກ, ຂາຍຍ່ອຍ ແລະ ຈົດແຈ້ງເອກະສານ ກ່ຽວກັບການນຳເຂົ້າຜະລິດຕະພັນຢາສູບ;

13. ໂຈະ ຫຼື ຍົກເລີກ, ສະເໜີໂຈະ ຫຼື ຍົກເລີກສັນຍາ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການທີ່ຂັດກັບກົດໝາຍສະບັບນີ້;

14. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

15. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;

16. ປະສານສົມທົບກັບກະຊວງການເງິນໃນການກຳນົດໂຄງສ້າງ ແລະ ອັດຕາອາກອນ, ການຈັດເກັບລາຍຮັບ ແລະ ນຳໃຊ້ກອງທຶນຄວບຄຸມຢາສູບໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

17. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມຢາສູບ;

18. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບຕໍ່ລັດຖະບານ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 53 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ, ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການໃຫ້ເປັນ ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບ;

3. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບພາຍໃນແຂວງ, ນະຄອນຫຼວງ;

4. ອອກ, ສະເໜີອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມຢາສູບ;

5. ສະໜັບສະໜູນການໃຫ້ຄຳແນະນຳ, ປຶກສາການອອກຢາສູບ, ການປິ່ນປົວ, ການບຳບັດຮັກສາ ແລະ ການຟື້ນຟູສຸຂະພາບຂອງຜູ້ຊົມໃຊ້ຢາສູບ ທີ່ຕ້ອງການອອກຢາສູບ;

6. ຊີ້ນຳໃນການເຊື່ອມສານວຽກງານໃຫ້ຄຳແນະນຳ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບ ພາຍໃນໂຮງໝໍ ແຂວງ, ນະຄອນຫຼວງ;

7. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ສະໜອງ, ສັບຊ້ອນ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານຄວບຄຸມຢາສູບ;

8. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດນຳເຂົ້າ, ສົ່ງອອກ, ຈຳໜ່າຍ ຜະລິດຕະພັນຢາສູບ;

9. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການອອກໃບອະນຸຍາດໃຫ້ຜູ້ຂາຍຍົກຜະລິດຕະພັນຢາສູບ;

10. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບຢາສູບ ຫຼື ສະເໜີກະຊວງສາທາລະນະສຸກ ເພື່ອຂໍທິດຊີ້ນຳ ແລະ ແກ້ໄຂ;

11. ສະເໜີຂັ້ນເທິງ ກ່ຽວກັບການໂຈະ ຫຼື ຍົກເລີກສັນຍາ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການທີ່ຂັດກັບກົດໝາຍສະບັບນີ້;

12. ເກັບກຳຂໍ້ມູນ ຮ້ານຂາຍຍົກ ແລະ ຈັດແຈ້ງເອກະສານ ກ່ຽວກັບການນຳເຂົ້າຜະລິດຕະພັນຢາສູບ ພາຍໃນ ແຂວງ, ນະຄອນຫຼວງ;

13. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

14. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄວບຄຸມຢາສູບ ຕາມການມອບໝາຍ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ຕໍ່ກະຊວງສາທາລະນະສຸກ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ, ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການໃຫ້ເປັນ ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມຢາສູບ;

3. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບພາຍໃນ ເມືອງ, ເທດສະບານ, ນະຄອນ;

4. ອອກ, ສະເໜີອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມຢາສູບ;

5. ສະໜັບສະໜູນການໃຫ້ຄຳແນະນຳ, ປຶກສາການອອກຢາສູບ, ການປິ່ນປົວ, ການບຳບັດຮັກສາ ແລະ ການຟື້ນຟູສຸຂະພາບຂອງຜູ້ຊົມໃຊ້ຢາສູບທີ່ຕ້ອງການອອກຢາສູບ;

6. ຊີ້ນຳໃນການເຊື່ອມສານວຽກງານ ໃຫ້ຄຳແນະນຳ, ປຶກສາ ແລະ ຊ່ວຍເຫຼືອຜູ້ຕ້ອງການອອກຢາສູບພາຍໃນ ໂຮງໝໍຊຸມຊົນ, ໂຮງໝໍນ້ອຍ ແລະ ຊຸມຊົນທີ່ຊົມໃຊ້ຢາສູບເປັນປະເພນີ;

7. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ສະໜອງ, ສັບຊ້ອນ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານຄວບຄຸມຢາສູບ;

8. ປະສານສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ໃນການອອກໃບອະນຸຍາດໃຫ້ຜູ້ຂາຍຍ່ອຍຜະລິດຕະພັນຢາສູບ;

9. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບຢາສູບ ຫຼື ສະເໜີພະແນກສາທາລະນະສຸກຂັ້ນແຂວງ ເພື່ອຂໍທິດຊີ້ນຳ ແລະ ແກ້ໄຂ;

10. ສະເໜີຂັ້ນເທິງ ກ່ຽວກັບການໂຈະ ຫຼື ຍົກເລີກ ສັນຍາ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການທີ່ຂັດກັບກົດໝາຍ;

11. ເກັບກຳຂໍ້ມູນ ຮ້ານຂາຍຍ່ອຍຜະລິດຕະພັນຢາສູບ ພາຍໃນ ເມືອງ, ເທດສະບານ, ນະຄອນ;

12. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ;

13. ປະສານສົມທົບກັບ ຫ້ອງການ, ອົງການລັດທຽບເທົ່າຫ້ອງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ຕໍ່ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານຄວບຄຸມຢາສູບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄວບຄຸມຢາສູບ ໂດຍສະເພາະ ການປະສານສົມທົບ, ຮ່ວມມື, ຄຸ້ມຄອງ, ຕິດຕາມ, ກວດກາ, ສະໜອງຂໍ້ມູນ, ຈັດກິດຈະກຳ, ສຶກສາ, ຄົ້ນຄວ້າ ແລະ ການປະຕິບັດມາດຕະການ ກ່ຽວກັບວຽກງານຄວບຄຸມຢາສູບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຄວບຄຸມຢາສູບ

**ມາດຕາ 56 (ປັບປຸງ) ອົງການກວດກາວຽກງານຄວບຄຸມຢາສູບ**

ອົງການກວດກາວຽກງານຄວບຄຸມຢາສູບ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຄວບຄຸມຢາສູບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 57 (ປັບປຸງ) ເນື້ອໃນການກວດກາວຽກງານຄວບຄຸມຢາສູບ**

ການກວດກາວຽກງານຄວບຄຸມຢາສູບ ມີເນື້ອໃນ ຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ໂຄງການ ກ່ຽວກັບວຽກງານຄວບຄຸມຢາສູບ;

2. ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ການເຄື່ອນໄຫວຂອງຜູ້ປະກອບການ ກ່ຽວກັບຜະລິດຕະພັນຢາສູບ;

4. ການສ້າງ ແລະ ປະຕິບັດແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາ ກ່ຽວກັບວຽກງານຄວບຄຸມຢາສູບ.

**ມາດຕາ 58 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານຄວບຄຸມຢາສູບ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດໍາເນີນການກວດກາວຽກງານຄວບຄຸມຢາສູບ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 59 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ປະກອບສ່ວນ ຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການຜະລິດ, ການນຳເຂົ້າ, ການສົ່ງອອກ, ການຈຳໜ່າຍ, ຊື້ ຂາຍ ຜະລິດຕະພັນຢາສູບ ໂດຍບໍ່ໄດ້ຮັບອະນຸຍາດ, ສູບຢາໃນສະຖານທີ່ຫ້າມສູບຢາ, ໂຄສະນາ ຜະລິດຕະພັນຢາສູບໃນທຸກຮູບແບບ, ບໍ່ພິມຄຳເຕືອນສຸຂະພາບ, ສະຫຼາກ, ບໍ່ມອບພັນທະເຂົ້າກອງທຶນຄວບຄຸມຢາສູບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

ສຳລັບ ພຶດຕິກຳ ແລະ ອັດຕາ ການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 61 ວັນງົດສູບຢາແຫ່ງຊາດ**

ສປປ ລາວ ຖືເອົາ ວັນທີ 31 ພຶດສະພາ ຂອງທຸກປີ ເປັນວັນງົດສູບຢາແຫ່ງຊາດ ດ້ວຍການສ້າງຂະບວນການ, ກິດຈະກຳຕ່າງໆ ກ່ຽວກັບການຄວບຄຸມຢາສູບ ແລະ ການສົ່ງເສີມສຸຂະພາບ.

**ມາດຕາ 62 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 63 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ